# ຂ່າ Galangal

ຢູ່ໃນຕະກຸນ: **Zingiberaceae**

ຊື່ວິທະຍາສາດວ່າ: **Languas galangal Linn. Stuntz**

ຂ່າເປັນພືດຜັກ ທີ່ມີຖິ່ນກຳເນີດໃນແຖບອາຊີຕາເວັນອອກສຽງໃຕ້ເປັນພືດພື້ນເມືອງທີ່ສາມາດນຳໃຊ້ທຸກພາກສ່ວນ ເປັນພືດທີ່ມີອາຍຸຍາວ ມີກິ່ນຫອມ ແລະ ລຳຕົ້ນມີສີນ້ຳຕານຂາວ ຢູ່ໃຕ້ດິນ

ສ່ວນກ້ານ ແລະ ໃບແມ່ນຢູ່ເໜືອພື້ນດິນປະມານ: 100 ຫາ 150 ຊຕມ, ສາມາດຈະເລີນເຕີບໂຕໄດ້ດີ ໃນສະພາບໃນດິນເກືອບທຸກຊະນິດ ແລະ ໃນບໍລິເວນຮົ່ມເງົາ, ແຕ່ຈະສາມາດຈະເລີນເຕີບໂຕໄດ້ດີກວ່າໃນບໍລິເວນດິນລ້ອນຜຸຜຸ່ຍ ຄວາມອຸດົມສົມບູນພໍ່ປານກາງ ແຕ່ບໍ່ມັກນ້ຳຖ້ອມຂັງ.

ຂ່າເປັນພືດທີ່ນຳມາປະກອບອາຫານໄດ້ຫຼາຍຊະນິດນອກນັ້ນຍັງຈັດຢູ່ໃນປະເພດພືດສະມຸນໄພ ໃນການປຸງແຕ່ງຢາພື້ນເມືອງ.

## 1. ການກະກຽມແນວພັນເພື່ອປູກ:

- √ ຂ່າທີ່ຈະນຳມາຂະຫຍາຍພັນຕ້ອງມີອາຍຸຢ່າງນ້ອຍ 1 ປີຂຶ້ນໄປ
- √ ຕັດແຍກຫົວຂ່າແກ່ ແລະ ໜໍ່ປະມານ: 2 ຫາ 3 ໜໍ່ / ຕົ້ນ
- √ ຕັດຮາກ, ຕັດໃບ ແລະ ການອອກຈົ່ງໄວ້ປະມານ: 20 ຊຕມ
- √ ອັດຕາແນວພັນທີ່ໃຊ້ປະມານ: 1700 Kg/ha. ( 1kg ປູກໄດ້ 4 ຂຸມ)
- √ ເນື້ອທີ່: 1ha ຈະປູກຂ່າໄດ້ປະມານ: 4800 ຕົ້ນ

## 2. ການກຽມດິນ.

- √ ໄຖພວນ ຫຼື ຄາດໃຫ້ເລິກປະມານ: 25 ຫາ 30 cm
- √ ຕາກດິນ ໄວ້ປະມານ: 6 ຫາ 7 ມື້,
- √ ປັບໜ້າດິນ ແລະ ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມ
- √ ຂະໜາດຂອງຂຸມ: 50 x 50 cm
- √ ໄລຍະຫ່າງລະວ່າງຕົ້ນ 1 x 1 m

## 3. ວິທີການປູກ.

- √ ນຳເອົາແນວພັນທີ່ກະກຽມໄວ້ລົງຂຸມປະມານ: 2 ຫາ 3 ຕົ້ນ
- √ ປົກດ້ວຍດິນ, ໃສ່ຝຸ່ນສູດ: 15_15_15 ປະມານ: 1 ບ່ວງແກງ / ຂຸມ
- √ ປົກປາກຂຸມດ້ວຍຫຍ້າແຫ້ງ ແລະ ຫົດນ້ຳໃຫ້ດິນຊຸ່ມ

## 4. ການບົວລະບັດຮັກສາ.

**ການໃສ່ຝຸ່ນ:** ເມື່ອຕົ້ນຂ່າມີອາຍຸໄດ້ 25 ຫາ 30 ມື້

- √ ແມ່ນໃຫ້ໃສ່ຝຸ່ນຄອກໃນອັດຕາ 150 ຫາ 300 kg / ha
- √ ຝຸ່ນສູດ: 15_15_15 ປະມານ: 210 kg/ ha ແລະໃສ່ 2 ເທື່ອ / ປີ
- √ ຝຸ່ນເຄມີປາລຸງຫົວຂ່າແມ່ນ 13_ 13_ 21 ໃສ່ທຸກເດືອນໃນປີທຳອິດ ປະມານ: 1 ບ່ວງແກງ / ຕົ້ນ ໂຮຍບໍລິເວນຊົ່ງຝຸ່ນ ແລະ ຫົດນ້ຳ

**ການໃຫ້ນ້ຳ:**

- √ ໃນຊ່ວງໄລຍະທຳອິດຂອງການປູກຄວນໃຫ້ນ້ຳ 2 ເທື່ອ / ມື້
- √ ຊ່ວງລະດູຝົນແມ່ນບໍ່ຈຳເປັນໃຫ້ນ້ຳ
- √ ຊ່ວງລະດູແລ້ງແມ່ນໃຫ້ອາທິດລະເທື່ອພໍໃຫ້ດິນຊຸ່ມຊື່ນ

**ການເສຍຫຍ້າ:**

ໃນໄລຍະທຳອິດຫຼັງຈາກປູກ ແມ່ນໃຫ້ເສຍຫຍ້າ 3 ເທື່ອ / ປີ



**ຂ່າອ່ອນ ໃຊ້ສຳລັບປຸງແຕ່ງອາຫານ**

## 5. ການເກັບກ່ຽວ

ຂ່າອ່ອນ ( ປຸງແຕ່ງອາຫານ ) ແມ່ນສາມາດເກັບໄດ້ຫຼັງປູກປະມານ: 6 ຫາ 8 ເດືອນ ແລະ ສາມາດເກັບໄດ້ຍາວນານຮອດ 10 ປີ, ຂ່າອ່ອນທີ່ສາມາດເກັບກ່ຽວໄດ້ນັ້ນ ແມ່ນສັງເກດຕົ້ນທີ່ມີໃບ 2 ຫາ 3 ໃບ



**ຂ່າແກ່ ໃຊ້ສຳລັບປຸງແຕ່ງຢາ**



**Laos Extension for Agriculture Project**
**P.O. Box 9159  Vientiane, Lao P.D.R.**
**Tel/fax: 021 732 162     Mobile: 020 5526277**
**Email: leap@laoex.org**

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ຂໍ້ແນະນຳ
# ບາງເຕັກນິກໃນການປູກຂ່າ
# ( Garangal )



Alpinia officinarum Hance

**ຈັດພິມໂດຍ:**
ໜ່ວຍງານພັດທະນາຮູບແບບ ແລະ ຝຶກອົບຮົມ CETDU